# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 9 ກໍຣະກະດາ 2023 (07-09-2023)

---

## ໂປໂລແລະຕີໂມທຽວ

*ເມື່ອໃດທີ່ບາງຄັ້ງມີຄົນເວົ້າເຖິງການເວົ້າຫຼືການປະພຶດຂອງທ່ານວ່າເປັນແບບໃດ?*

**ຈຸດສຳຄັນໃນບົດຮຽນ:** ຕັ້ງໃຈໃສ່ກັບການໃຫ້ຄຳແນະນຳຂອງທ່ານໃນການເຕີບໂຕໃນພຣະຄຣິດແລະຄຳສອນຂອງພຣະອົງ.
**ພຣະຄັມພີຕອບສນອງຕໍ່ຊີວິດ:**
ເດັກນ້ອຍສ່ວນໃຫ່ຍຢາກເປັນຄືກັນກັບພໍ່ແມ່. ຂ້າພະເຈົ້າບໍ່ມີຂໍ້ຍົກເວັ້ນ. ພໍ່ຂອງຂ້າພະເຈົ້າຢູ່ໃນທຸຣະກິດຂາຍເຄື່ອງແຫ້ງ, ແລະເຖິງແມ່ນວ່າຂ້າພະເຈົ້າບໍ່ມີຄວາມປາຖນາທີ່ຈະເຮັດທຸຣະກິດນີ້ສືບຕໍ່ຈາກພໍ່ໄປໃນຖານະເຈົ້າຂອງຮ້ານກໍດີ, ແຕ່ຂ້າພະເຈົ້າແນ່ໃຈວ່າຂ້າພະເຈົ້າຢາກເປັນຄືກັນກັບເພິ່ນ, ຂ້າພະເຈົ້າເຕີບໂຕຂຶ້ນພ້ອມໆກັບການທຳງານຢູ່ໃນຮ້ານຄ້າຂອງພໍ່, ຂ້າພະເຈົ້າເຮັດວຽກໃນວັນເສົາແລະໃນຊ່ວງຣະດູຮ້ອນ. ຂ້າພະເຈົ້າໄດ້ເບິ່ງວິທີທີ່ເພິ່ນໃຫ້ການບໍຣິການກັບລູກຄ້າ, ການຈັດວາງເຄື່ອງໃນຕູ້ເຄື່ອງ, ແລະການກຳກັບຈັກເກັບເງິນ, ແລະຂ້າພະເຈົ້າໄດ້ຮຽນເອົາຕາມແບບຢ່າງທຸກໆສິ່ງທີ່ຂ້າພະເຈົ້າໄດ້ເຫັນ. ມັນບໍ່ດົນກ່ອນທີ່ຄົນຈະເວົ້າວ່າ "ເຈົ້າຈັ່ງແມ່ນຄືກັນກັບພໍ່ຂອງເຈົ້ານໍ," ແມ່ນແຕ່ໃນທຸກວັນນີ້, ພັນລະຍາຂອງຂ້າພະເຈົ້າຍັງເວົ້າໄປເຖິງສິ່ງທີ່ຂ້າພະເຈົ້າເວົ້າແລະທ່າທີທີ່ຂ້າພະເຈົ້າເຮັດ, ແລະນາງຈະເວົ້າອອກມາວ່າ "ເຈົ້າຈັ່ງແມ່ນຄືກັນກັບພໍ່ຂອງເຈົ້າແທ້!" ຂ້າພະເຈົ້າຖືວ່ານີ້ເປັນຄຳຍ້ອງຍໍສູງສົ່ງ. ຂ້າພະເຈົ້າສາມາດເຫັນພໍ່ຂອງຂ້າພະເຈົ້າໃນຫຼາຍສິ່ງທີ່ຂ້າພະເຈົ້າເຮັດແລະວິທີທີ່ຂ້າພະເຈົ້າປະຕິບັດງານ. ຫຼັງຈາກທັງໝົດນີ້, ທ່ານໄດ້ເປັນແບບຢ່າງທີ່ດີ!

ໃນຫຼາຍໆທາງ, ນັ້ນຄືການກ່ຽວພັນຂອງການໃຫ້ຄຳແນະນຳ: ການຮຽນຮູ້ທີ່ຈະຕິດຕາມແບບຢ່າງຄົນອື່ນເພື່ອໃຫ້ຊີວິດຝ່າຍຈິດວິນຍານຈະເຣີນເຕີບໂຕຂຶ້ນ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

**<u>ສຶກສາພຣະຄັມພີ</u>**

### 1. ກິຈການ. 16:1-5

*1. ຝ່າຍໂປໂລກໍໄດ້ໄປຍັງເມືອງເດຣະເບແລະເມືອງລີຊະທາແລະເບິ່ງແມ, ທີ່ນັ້ນມີລູກສິດຜູ້ນຶ່ງຊື່ຕີໂມທຽວເປັນລູກຊາຍຂອງຍິງຊາວຢິວຄົນນຶ່ງຜູ້ເຊື່ອຖືແຕ່ພໍ່ເປັນຊາວກຣີກ. 2. ຕີໂມທຽວເປັນຄົນມີຊື່ສຽງດີໃນຖ້າມກາງພວກພີ່ນ້ອງທີ່ຢູ່ ໃນເມືອງລີຊະທາແລະເມືອງອີໂກນີອົນ. 3. ໂປໂລມີໃຈຢາກເອົາຕີໂມທຽວໄປນຳຈຶ່ງໄດ້ໃຫ້ຮັບພິທີຕັດເພາະເຫັນແກ່ຊາວຢິວທີ່ຢູ່ໃນເຂດນັ້ນເພາະຄົນເຫລົ່ານັ້ນທຸກຄົນຮູ້ວ່າພໍ່ຂອງທ່ານເປັນຊາວກຣີກ. 4. ເມື່ອທ່ານເຫລົ່ານັ້ນກຳລັງຜ່ານໄປຕາມເມືອງຕ່າງໆກໍໄດ້ມອບຂໍ້ບັງຄັບທີ່ພວກອັຄສາວົກແລະພວກເຖົ້າແກ່ທີ່ຢູ່ໃນກຸງເຢຣູຊາເລັມໄດ້ຕົກລົງກັນນັ້ນ ໃຫ້ເຂົາຖືຮັກສາ. 5. ດ້ວຍເຫດນີ້ຄຣິສຕະຈັກທັງຫລາຍຈຶ່ງເຂັ້ມແຂງຂຶ້ນໃນຄວາມເຊື່ອແລະຈຳນວນຄຣິສຕະສະມາຊິກກໍທະວີຂຶ້ນທຸກໆວັນ.*

ກິຈການ 16 ໄດ້ອະທິບາຍເຖິງການເລີ້ມຕົ້ນຂອງການປະກາດຂ່າວປະເສີດຄັ້ງທີ່ສອງຂອງໂປໂລ. ໃນທີ່ນັ້ນມີຊາຍໜຸ່ມຄົນນຶ່ງຊື່ ຕີໂມທຽວເປັນຄົນທີ່ມີຈິດໃຈເຫຼື້ອມໃສເຊື່ອໃນພຣະຄຣິດ. ຕີໂມທຽວເປັນຄົນທີ່ຖືກກ່າວເຖິງໃນຖ້າມກາງພວກພີ່ນ້ອງໃນເມືອງປີຊະທາແລະເມືອງອີໂກນີອົດ. ໃນການເດີນທາງປະກາດຄັ້ງທີ່ສອງຂອງໂປໂລ, ໂປໂລແລະຕີໂມທຽວໄດ້ຮູ້ຈັກຄຸ້ນເຄີຍກັນ, ພໍ່ຂອງຕີໂມທຽວເປັນຊາວກຣີກ, ແລະໃນຄຳສັບທີ່ວ່າ " ພໍ່ຂອງລາວເປັນຊາວກຣີກ" ຊີ້ໃຫ້ເຫັນວ່າພໍ່ຂອງຕີໂມທຽວອາດເສັຽຊີວິດໃນເວລາທີ່ໂປໂລໄດ້ມາເຖິງທີ່ນັ້ນ. ດັ່ງນັ້ນ, ໂປໂລອາດເປັນເໝືອນພໍ່ຂອງຕີໂມທຽວ. ແລະຕໍ່ມາໂປໂລໄດ້ເອີ້ນຕີໂມທຽວວ່າ "ລູກແທ້ໃນຄວາມເຊື່ອ" (ຕີໂມ

ທຽວ1:2) ນັ້ນຄືເຣື່ອງລາວໃນອະດີດຂອງຕີໂມທຽວ, ຕີໂມທຽວໄດ້ກາຍມາເປັນຜູ້ຊ່ວຍອັຄສາວົກທີ່ມີຄຸນຄ່າສູງ. ການຕັດສິນໃຈຂອງຕີໂມທຽວທີ່ຈະຮັບເອົາຄຳຊັກຊວນຂອງໂປໂລໃຫ້ເຂົ້າຮ່ວມການປະກາດຂ່າວກັບພວກເພິ່ນແນ່ນອນວ່າລາວໄດ້ເຮັດດ້ວຍຄວາມຮູ້ຢ່າງຄົບຖ້ວນກ່ຽວກັບອຸປະສັກສິ່ງທີ່ຈະໄດ້ປະເຊີນ. ບໍ່ຕ້ອງສົງສັຍວ່າຕີໂມທຽວແລະຄອບຄົວຂອງລາວໃນຂະນະນີ້ຫຼືໃນທັນທີທັນໃດທີ່ໂປໂລໄດ້ໄປຢັ້ງມຢາມເມືອງລີຊະທາຄັ້ງທຳອິດ. ແມ່ນ, ຕີໂມທຽວໄດ້ຕ້ອນຮັບການຮຽກເອີ້ນຂອງພຣະເຈົ້າຜ່ານທາງໂປໂລເພື່ອໄປກັບໂປໂລແລະຊີລາໃນການສືບຕໍ່ໃນການເດີນທາງຂອງພວກເພິ່ນ. ດັ່ງນັ້ນ, ໃນການທີ່ຈະເດີນໄປດ້ວຍກັນຄຽງບ່າຄຽງໄລ່ກັບໂປໂລໄດ້ໃຫ້ຄຳແນະນຳແກ່ຕີໂມທຽວໂດຍກົງ. ຕີໂມທຽວເຫັນທຸກດ້ານໃນຄວາມເປັນໂປໂລ, ບໍ່ວ່າຈະເປັນບຸກຄະລິກສ່ວນຕົວຫຼືຕໍ່ສາທາລະນະຊົນ.

*ຕົວຢ່າງຂອງຄົນອື່ນໄດ້ຊ່ວຍທ່ານໃຫ້ໃຫຍ່ຂຶ້ນໃນຖານະເປັນຄຣິສະຕຽນຢ່າງໃດ?*

ໃຫ້ພວກເຮົາສັງເກດໃນຫຼັກການໃຫ້ຄຳແນະນຳປໂຍກນີ້. ການໃຫ້ຄຳແນະນຳທີ່ດີທີ່ສຸດສຳລັບສ່ວນຕົວບຸກຄົນໃດຄົນນຶ່ງໃນເວລາທີ່ທ່ານແບ່ງປັນຄວາມຮູ້ສຶກກັບຄົນທີ່ທ່ານກຳລັງເຮັດວຽກຮ່ວມຢູ່ນຳໃນແຕ່ລະວັນ. ການເຮັດວຽກຮ່ວມກັນໂດຍມີເປົ້າໝາຍສາມາດເຮັດໃຫ້ມີໂອກາດຫຼາຍຢ່າງເກີດຂຶ້ນສຳລັບຜູ້ທີ່ຖືກສອນໃຫ້ເປັນຜູ້ນຳໃນວຽກງານທີ່ຖືກມອບໝາຍໃຫ້. ເຊັ່ນການຝຶກອົບຮົມໃຫ້ຮຽນຮູ້ຈຸດມຸ້ງໝາຍໃນໜ້າທີ່ການງານຈະສາມາດມີຄຸນຄ່າທີ່ສູງທີ່ສຸດ, ແລະບໍ່ມີການໃຫ້ການອົບຮົບໃດໆທີ່ດີກ່ວາການເບິ່ງຈາກຕົວຢ່າງຂອງຜູ້ທີ່ໃຫ້ຄຳແນະນຳແລະມີສ່ວນຮ່ວມກັບວຽກງານທີ່ແຈ້ງໃຫ້ຮູ້. ອີກເຣື່ອງນຶ່ງທີ່ໂດດເດັ່ນໃນເຣື່ອງຂອງຕີໂມທຽວແມ່ນເຣື່ອງຄວາມເຊື່ອຂອງແມ່ຂອງລາວແລະການເຕີບໂຕໃນຄວາມເຊື່ອຂອງລາວ, ໃນຂໍ້ນີ້, ພວກເຮົາໄດ້ຖືກບອກໃຫ້ຮູ້ວ່າຕີໂມທຽວເປັນ"ລູກຊາຍຂອງຍິງຊາວຢິວທີ່ເຊື່ອ" ແຕ່ 2 ຕີໂມທຽວໄດ້ບອກຊື່ຂອງນາງ, ຊື່ຢູນີເກ. ເຊັ່ນດຽວກັບແມ່ເຖົ້າຊື່ໂລອີ(ຂໍ້ 1:5) ໃນຂໍ້ນັ້ນ, ໂປໂລໄດ້ສະແດງຄວາມຄິດເຫັນກ່ຽວກັບຄວາມເຊື່ອທີ່ຈິງໃຈຮ່ວມກັນລະຫວ່າງລູກຊາຍ, ແມ່, ແລະແມ່ເຖົ້າ. ຕີໂມທຽວໄດ້ຮັບຄວາມນິຍົມຊົມຊອບຈາກພວກພີ່ນ້ອງທີ່ໄດ້ກ່າວເຖິງເຣື່ອງຊີວິດຂອງລາວເພື່ອເປັນລູກສິດແລະໃຫ້ຄຳແນະນຳລາວ.

## 2. 2 ຕີໂມທຽວ 2:1-2

*1. ເຫດສັນນັ້ນລູກຂອງເຮົາເອີຍ, ຈົ່ງເຂັ້ມແຂງຂຶ້ນດ້ວຍພຣະຄຸນຊຶ່ງມີຢູ່ໃນພຣະຄຣິດ ຄືພຣະເຢຊູ. 2. ຈົ່ງມອບຄຳສອນທີ່ເຈົ້າໄດ້ຍິນຈາກເຮົາຕໍ່ໜ້າພະຍານຫລາຍຄົນ ໄວ້ກັບຄົນຊື່ສັດທີ່ສາມາດສອນຄົນອື່ນໄດ້ດ້ວຍ.*

ໃນຫຼາຍເດືອນແລະຫຼາຍປີຫຼັງຈາກໂປໂລໄດ້ຊັກຊວນຕີໂມທຽວໃຫ້ເຂົ້າຮ່ວມໃນການເດີ**ນ**ທາງໄປເປັນ**ຜູ້**ເຜີຍແຜ່ສອນພຣະທັມຄຳສອນຄັ້ງທີສອງ, ຕີໂມທຽວໄດ້ພິສູດໃຫ້ເຫັນວ່າເປັນເພື່ອ**ນ**ຮ່ວມງານທີ່**ມີ**ປະສິດຕິພາບສູງໃນການເຜີຍແຜ່ ພຣະກິດຕິ**ຄຸນ**ຂ່າວປະເສີດ. ໂປໂລໄດສົ່ງຕີໂມທຽວໄປຮັບໃຊ້ໃນພາຣະກິດຫຼາຍຢ່າງໃນນາມຂອງໂປໂລ. ຕີໂມທຽວເປັນຜູ້ຕາງໜ້າໂປໂລໄປປະກາດຕາມຄຣິສຕະຈັກຕ່າງໆໃນປີຕໍ່ມາຂອງລາວ, ໂປໂລໄດ້ບອກເຣື່ອງນີ້ກ່ຽວກັບຕີໂມທຽວ: "ເຮົາບໍ່ມີຜູ້ໃດທີ່ມີນ້ຳໃຈເໝືອນຕີໂມທຽວຜູ້ເປັນຄົນເອົາໃຈໃສ່ໃນ**ຄວາມ**ສຸກທຸກຂອງພວກເຈົ້າໂດຍແທ້.ເພາະວ່າຄົນອື່ນໆ ຍ່ອມສະແຫວງຫາຜົນປະໂຫຍດສ່ວນຕົວ**ບໍ່**ສະແຫວງຫາປໂຍດຂອງພຣະເຢຊູຄຣິດ. ແຕ່ເຈົ້າທັງຫລາຍກໍຮູ້ເຖິງ ຄຸນຄ່າຂອງຕີໂມທຽວດີແລ້ວວ່າເພິ່ນໄດ້ຮັບໃຊ້ຮ່ວມກັບເຮົາໃນການປະຕິບັດຂ່າວປະເສີດເໝືອນລູກຮັບໃຊ້ພໍ່. **(ຟີລິບປອຍ 2:20-22).**

**ຄຳ**ເວົ້າເຫຼົ່ານີ້ກ່ຽວກັບຕີໂມທຽວໄດ້ສະແດງໃຫ້ເຫັນເປົ້າໝາຍສະເພາະເຈາະຈົງສຳລັບການມີສາຍສຳພັນກັບການໃຫ້ຄຳແນະນຳປຶກສາ. ໃນຂະນະທີ່ເປົ້າໝາຍເບື້ອງຕົ້ນອາດຈະເປັນພຽງການແກ້ໄຂບັນຫາ, ແລະການບັນລຸຈຸດປະສົງເປົ້າໝາຍ, ຫຼືມີບາງສິ່ງບາງຢ່າງທີ່ຄ້າຍຄືກັນ, ຄວາມສັມພັນຈະຕ້ອງມີຫຼາຍກ່ວານັ້ນ. ໃນທີ່ສຸດ, ຄວາມປາຖນາຂອງເຮົາຄວນຈະເປັນຄົນທີ່ເຮົາກຳລັງສອນໃຫ້ຈະເຣີນເຕີບໂຕໃນບຸກຄະລິກທ່າທາງແລະຄວາມເຊື່ອເພື່ອໃຫ້ຄວາມເຕີບໂຕທາງຝ່າຍຈິດວິນຍານຂອງເຂົາໄດ້ປະກົດ**ເດັ່ນ**ຊັດ**ໃນການ**ສາຍແສງ. ພວກເຮົາກຳລັງຝຶກຝົນພວກເຂົາເພື່ອຄວາມຈະເຣີນກ້າວໜ້າຂອງອານາຈັກຂອງພຣະເຈົ້າ.

ຄວາມສຳເຣັດຂອງໂປໂລກັບຕີໂມທຽວແມ່ນເກີດຈາກການພັດທະນາຝຶກຝົນວັນຕໍ່ວັນໂປໂລໄດ້ເຮັດສິ່ງນີ້ໃນຊີວິດວັຍໜຸ່ມຂອງຊາຍ

ຄົນນີ້. ພວກເພິ່ນຢູ່ນຳກັນເປັນເວລາຫຼາຍເດືອນ, ຕີໂມທຽວໄດ້ຮັບປະໂຍດຈາກການຫຸ້ມເຫລີດສອນຂອງໂປໂລໃນການເຕີບໂຕທາງຝ່າຍຈິດວິນຍານແລະການເຕີບໂຕເປັນຜູ້ໃຫ່ຍຂອງລາວ. ຄວາມສັມພັນນັ້ນ, ເຖິງຢ່າງໃດກໍຕາມ, ໄດ້ປ່ຽນໄປຕາມການເວລາໃນຖານະໂປໂລເປັນຜູ້ໃຫ້ຄຳແນະ**ນຳ**ກໍໄດ້ຊອກຫາທີ່ຈະໃຫ້ກຳລັງໃຈກັບຕີໂມທຽວເມື່ອເວລາທີ່ເລີ້ມຮັບໃຊ້ເປັນສິດຍາພິບານຂອງຄຣິສຕະຈັກ. ເນື້ອໃນຂອງຈົດໝາຍສອງສະບັບທີ່ກ່າວເຖິງຕີໂມທຽວໄດ້ຖືກຂຽນຂື້ນເພື່ອໃຫ້ຄຳແນະນຳ, ໃຫ້ກຳລັງໃຈ, ແລະສນັບສນູນຕີໂມທຽວໃຫ້ທຳງານທີ່ພຣະເຈົ້າຊົງເອີ້ນໃຫ້ເຮັດ. ໂປໂລບໍ່ເຄີຍທີ່ຈະເຊົາຢຸດຄິດເຖິງຄວາມສັມພັນຂອງພວກເພິ່ນຄືກັນກັບພໍ່ກັບລູກໃນຄວາມເຊື່ອ. ໃນຖານະທີ່ເປັນພໍ່ທາງຝ່າຍຈິດວິນຍານ, ໂປໂລຍັງໄດ້ເຫັນການເອົາໃຈໃ**ສ່**ຮັບຜິດຊອບຂອງຕົນເອງຕໍ່ການເຕີບໂຕຂອງທາງຝ່າຍຈິດວິນຍານຢ່າງຕໍ່ເນື່ອງ.

ສອງຕີໂມທຽວບົດ 2:1-2 ໄດ້ກຳນົດຮູບແບບທີ່ສຳຄັນສຳລັບການແນະນຳແລະການເປັນສາວົກ. ຄົນນຶ່ງເປັນລູກສິດຂອງອີກຄົນນຶ່ງ, ຜູ້ທີ່ເປັນລູກສິດຂອງໃຜຜູ້ນຶ່ງ, ຜູ້ທີ່ເຮັດ, ໃຫ້ຄົນອື່ນເປັນລູກສິດ! ແນ່ນອນພວກເຮົາເຫັນສິ່ງເຫຼົ່ານີ້ໃນຊີວິດຂອງຕີໂມທຽວ. ພຣະເຢຊູໄດ້ເອີ້ນເອົາຜູ້ຊາຍສິບສອງຄົນມາພຣະອົງໄດ້ແນະນຳແລະໄດ້ສິດສອນໃຫ້ເປັນສາວົກທີ່ເຕີບໂຕທາງຝ່າຍຈິດວິນຍານ. ຈາກອັຄສາວົກລຸ້ນທຳອິດເຫຼົ່ານີ້, ບາຣະນາບາໄດ້ຮຽນຮູ້ວິທີການດຳເນີນຊີວິດແລະການເຕີບໃຫ່ຍຂອງຄຣິສະຕຽນໃນອົງພຣະຜູ້ເປັນເຈົ້າ. ໃນທາງກົງກັນຂ້າມ, ບາຣະນາບາໄດ້ມາຄຽງຂ້າງໂຊໂລແຫ່ງເມືອງຕາໂຊເພື່ອນຳໂຊໂລເຂົ້າໄປຮ່ວມສາມະຄີທັມຂອງຄຣິສຕະຈັກເຢຣູຊາເລັມແລະຊຸກຍູ້ການເຕີບໂຕຂອງທ່ານໃນຖານະເປັນຜູ້ເຊື່ອ. ໂຊໂລ, ໂປໂລ, ໃນທາງກັບກັນ, ກໍໄດ້ສ້າງລູກສິດຕີໂມທຽວຜູ້ທີ່ໄດ້ປ່ຽນມາຢູ່ໃນສາສນາຄຣິດ. ຕີໂມທຽວ, ດຽວນີ້, ໄດ້ຖືກປ່ຽນຖານະວ່າເປັນຜູ້ຮັບຜິດຊອບທີ່ຈະຖ່າຍທອດສິ່ງທີ່ລາວໄດ້ຮຽນຮູ້ໃຫ້ກັບຄົນອື່ນໆ. ໃນທາງກັບກັນ, ພວກເຂົາຈະຕ້ອງສົ່ງຕໍ່ໃຫ້ກັບຄົນອື່ນໆທີ່ຈະສືບທອດວຽກງານຂອງການໃຫ້ຄຳປຶກສາກັບຜູ້ເຊື່ອຄົນລຸ້ນຕໍ່ໆໄປ.

## 3. **2 ຕີໂມທຽວ 3:10-12**

*10. ບັດນີ້ເຈົ້າກໍໄດ້ຕິດຕາມເຮົາໃນດ້ານຄຳສອນ, ກິຣິຍາ, ຄວາມມຸ້ງໝາຍ, ຄວາມເຊື່ອ, ຄວາມພຽນ, ຄວາມຮັກ, ຄວາມໜັກແໜ້ນໝັ້ນຄົງ, 11. ແລະການຖືກຂົ່ມເຫງກັບການທົນທຸກລຳບາກຕ່າງໆຂອງເຮົາຄືສິ່ງທີ່ໄດ້ເກີດແກ່ເຮົາໃນເມືອງອັນຕີໂອເຊັຽ, ໃນເມືອງອີໂກນີອົນ, ແລະໃນເມືອງລີຊະທາ ການຂົ່ມເຫງຕ່າງໆທີ່ເຮົາໄດ້ທົນເອົານັ້ນອົງພຣະຜູ້ເປັນເຈົ້າໄດ້ຊົງໂຜດດຶງເຮົາອອກຈາກສິ່ງເຫລົ່ານັ້ນທັງໝົດ. 12. ແທ້ຈິງ, ບັນດາຄົນທີ່ປາຖນາຈະດຳເນີນຊີວິດຄຣິສະຕຽນເປັນຄົນນັບຖືພຣະເຈົ້າຢ່າງຖືກຕ້ອງ ກໍຈະຖືກກົດຂີ່ຂົ່ມເຫງ.*

ໃນໃຈກາງເນື້ອໃນຈົດໝາຍຂອງໂປໂລ, ໂປໂລໄດ້ເຕືອນຕີໂມທຽວເຖິງແບບຢ່າງທີ່ທ່ານໄດ້ວາງແບບຢ່າງໄວ້ໃນການເປັນຄຣູສອນ. ທ່ານໄດ້ໃຊ້ຄວາມຊົງຈຳນີ້ເພື່ອທ້າທາຍຕີໂມທຽວໃຫ້ເຮັດຕາມແບບຢ່າງດຽວກັນຕໍ່ໜ້າຄົນເຫຼົ່ານັ້ນທີ່ລາວເປັນສິດຍາພິບານເຂົາ. ໂປໂລໄດ້ກ່າວເຖິງຄຸນລັກສະນະເຈັດຢ່າງທີ່ທ່ານໄດ້ເປັນແບບຢ່າງໃຫ້ກັບຕີໂມທຽວ, ແລະທ່ານໄດ້ບັນຊາສັ່ງຕີໂມທຽວປະຕິບັດຕາມຄຸນລັກສະນະອັນດຽວກັນນັ້ນໃນຊີວິດຂອງລາວເອງ: ການສອນ, ວາງຕົວຫຼືການປະພຶດ, ຈຸດປະສົງຂອງພຣະເຈົ້າ, ຄວາມເຊື່ອ, ຄວາມອົດທົນ, ແລະຄວາມອົດກັ້ນໄວ້ນານ.

ຕີໂມທຽວໄດ້ຮັບຮູ້ເຖິງ "ການຖືກຂົ່ມເຫັງແລະຄວາມທຸກລຳບາກ" ທີ່ຈິງຄຸນລັກສະນະເຫຼົ່ານີ້ເຫັນໄດ້ຊັດເຈນໃນວິທີທີ່ໂປໂລຕອບໂຕ້ຕໍ່ຄວາມທຸກທໍຣະມານທີ່ທ່ານໄດ້ປະເຊີນ. ຕີໂມທຽວກໍໄດ້ຢູ່ຜ່ານການຂົ່ມເຫັງແລະຄວາມທຸກຍາກລຳບາກຫຼາຍຢ່າງທີ່ໂປໂລໄດ້ປະເຊີນ.

ໂປໂລໄດ້ເປັນແບບຢ່າງຕໍ່ຕີໂມທຽວວ່າຈະຕອບໂຕ້ແນວໃດໃນຖານະທີ່ເປັນຜູ້ຕິດຕາມພຣະຄຣິດເມື່ອປະສົບກັບສະພາບການຢ່າງນີ້. ທ່ານໄດ້ໜູນໃຈຕີໂມທຽວໃຫ້ສົ່ງຕໍ່ຄວາມສາມາດນັ້ນໃຫ້ແກ່ຜູ້ທີ່ລາວສອນເຊັ່ນກັນ. ພວກເຮົາຈະເຮັດໃຫ້ດີທີ່ຈະຊ່ວຍຜູ້ທີ່ພວກເຮົາໃຫ້ຄຳແນະນຳໃຫ້ເຂົ້າໃຈວ່າໃນຖານະທີ່ເປັນຜູ້ເຊື່ອ ພວກເຮົາກໍຈະໄດ້ປະສົບກັບຄວາມກົດດັນແລະການເຍາະເຍີ້ຍທີ່ເພີ້ມຂື້ນໃນວັນຂ້າງໜ້າເພາະຄວາມເຊື່ອຂອງພວກເຮົາ. ດັ່ງທີ່ໂປໂລໄດ້ເປັນແບບຢ່າງໃຫ້ກັບຕີໂມທຽວ, ພວກເຮົາສາມາດຍົກຕົວຢ່າງວິທີທີ່ເຮົາຈະຕ້ອງຕອບໂຕ້. ການຕອບໂຕຂອງພວກເຮົາໃຫ້ເຫັນເຖິງຄວາມເຊື່ອອັນເດັດດ່ຽວຂອງພວກເຮົາໃນພຣະເຢຊູຄຣິດ.

*ແມ່ນຫຍັງທີ່ຊຸກຍູ້ທ່ານໃຫ້ສືບຕໍ່ໃນການເຕີບໂຕຂຶ້ນໃນຖານະເປັນຜູ້ຕິດຕາມພຣະຄຣິດ?*

ຄຸນສົມບັດຫຼືຄຸນລັກສະນະເຫຼົ່ານີ້ໄດ້ກ່າວໄວ້ໂດຍໂປໂລຈາກການສະຫຼຸບອັນຍິ່ງໃຫ່ຍສໍາລັບການສິດສອນແລະເປັນແບບຢ່າງການເຕີບໂຕຂອງຄຣິສະຕຽນກັບພວກຜູ້ທີ່ພວກເຮົາໄດ້ແນະນໍາ. ຄໍາສອນອັນດີເປັນສິ່ງທີ່ຈໍາເປັນ, ຄວາມສັດຊື່ໃນການປະພຶດແມ່ນສໍາຄັນ. ໃຫ້ພວກເຮົາຊ່ວຍເຫຼືອຄົນອື່ນໃຫ້ໄດ້ຮັບເອົາຈຸດປະສົງທີ່ເປັນກຽດແກ່ພຣະເຈົ້າຕໍ່ຊີວິດຂອງພວກເຂົາ. ໂດຍການເປັນຕົວຢ່າງຂອງຕົວພວກເຮົາເອງ, ພວກເຮົາສາມາດທ້າທາຍເຂົາໃຫ້ສະແດງຄວາມສັດຊື່ໃນທຸກສິ່ງທີ່ພວກເຂົາເຮັດ, ສະແດງຄວາມອົດທົນກັບຄົນອື່ນແລະອົດທົນຕໍ່ສະຖານະການທີ່ເປັນທາງລົບ. ເໜືອສິ່ງອື່ນໃດ, ໃຫ້ພວກເຮົາເປັນແບບຢ່າງແລະສອນເຂົາໃຫ້ສະແດງຄວາມຮັກຕໍ່ພຣະເຈົ້າໃນສາຍສັມພັນທີ່ໃຫ້ຄວາມຮັກແພງຕໍ່ຄົນອື່ນ.

*ພວກເຮົາສາມາດຮຽນຫຍັງແດ່ຈາກສາຍສັມພັນລະຫວ່າງໂປໂລແລະຕີໂມທຽວ?*

## ນໍາໃຊ້ໃນຊີວິດ

ພວກເຮົາຄວນເອົາໃຈໃສ່ໃນການໃຫ້ຄໍາແນະນໍາຂອງພວກເຮົາກ່ຽວກັບການເຕີບໂຕໃນພຣະຄຣິດແລະໃນພຣະຄໍາຂອງພຣະອົງ. ຈົ່ງເລືອກເອົານຶ່ງຂໍ້ຂອງການນໍາໃຊ້ໃນຊີວິດ:

- **ສໍາຫຼວດ.** ກວດເບິ່ງຊີວິດຂອງທ່ານໃນແງ່ຂອງຄຸນສົມບັດທີ່ມີຢູ່ໃນ 2 ຕີໂມທຽວ 3:10. ຂອບຄຸນພຣະເຈົ້າສໍາລັບສິ່ງທີ່ທ່ານເຫັນການເຕີບໂຕແລະຂໍໃຫ້ພຣະເຈົ້າໃຫ້ສະຕິປັນຍາແລະຄວາມເຂັ້ມແຂງໃນການເຕີບໂຕໃນສ່ວນອື່ນໆອີກ.
.
- **ສນັບສນູນຊຶ່ງກັນແລະກັນ.** ພົບປະກັບຜູ້ທີ່ເຊື່ອຄົນອື່ນແລະປຶກສາຫາລືກ່ຽວກັບຄຸນລັກສະນະຄຸນສົມບັດຕ່າງໆທີ່ລະບຸໄວ້ໃນ 2 ຕີໂມທຽວ 3:10. ຊ່ວຍສໍາຫຼວດຄວາມກ້າວໜ້າຂອງທ່ານແລະທໍາງານຮ່ວມກັນແລະກັນໃນການຊ່ວຍເຫຼືອຊຶ່ງກັນແລະກັນໃຫ້ເຕີບໃຫຍ່ຂຶ້ນ.

- **ເປັນຜູ້ໃຫ້ຄໍາແນະນໍາ.** ບັດນີ້ການສຶກສາທັງໝົດພາກກ່ຽວກັບການໃຫ້ຄໍາແນະນໍາໄດ້ສໍາເຣັດລົງແລ້ວ, ຈົ່ງຊອກຄົນທີ່ທ່ານສາມາດຊ່ວຍສ້າງເຂົາຂຶ້ນໃຫ້ເປັນລູກສິດ. ເດີນຄຽງຂ້າງໄປດ້ວຍກັນກັບເຂົາ, ຊ່ວຍໃຫ້ຄໍາແນະນໍາແລະການສອນເໝືອນດັ່ງໂປໂລໄດ້ເຮັດກັບຕີໂມທຽວ.

ພວກເຮົາທຸກຄົນມີຄົນນຶ່ງໃນຊີວິດຂອງພວກເຮົາທີ່ພວກເຮົາໄດ້ເບິ່ງເຫັນແລະຕ້ອງການທີ່ຈະໃຫ້ເປັນເໝືອນຕົວເຮົາ. ບໍ່ມີບ່ອນໃດທີ່ສໍາຄັນກ່ວາໃນຊີວິດຄຣິສະຕຽນ. ຂໍໃຫ້ພວກເຮົາເຮັດທຸກສິ່ງທີ່ເຮັດໄດ້ເພື່ອຊອກຫາທີ່ປຶກສາເພື່ອຊ່ວຍພວກເຂົາ, ແລະຊອກຫາຄົນທີ່ພວກເຮົາສາມາດຊ່ວຍໄດ້ໃນກຸ່ມຄຣິສະຕຽນຂອງພວກເຮົາ.

**ອຸປຖັມໂດຍລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ VR**